# ໜ່ວຍພັກກົມບໍລິການ

# ສືບຕໍ່ນຳພາດຳເນີນພາລະບົດບາດເປັນນາຍທະນາຄານ



✸ ໂດຍ: ຣັດສະໝີ ດວງສັດຈະ

ໜ່ວຍພັກກົມບໍລິການແມ່ນຂຶ້ນກັບອົງຄະນະພັກທະນາຄານແຫ່ງ ສປປ ລາວ ເຊິ່ງມີໜ້າທີ່ໃນການດຳເນີນພາລະບົດບາດເປັນທະນາຄານຂອງທະນາຄານ (ນາຍທະນາຄານ) ແລະ ມີພາລະກິດອັນສຳຄັນໃນການຊຸກຍູ້ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍເງິນຕາຂອງຊາດ ທັງເປັນຜູ້ສະໜອງແຫຼ່ງທຶນສຸດທ້າຍ, ປະຕິບັດແຜນຍຸດທະສາດຂອງທະນາຄານແຫ່ງ ສປປ ລາວ ແລະ ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ.

ສະຫາຍ ນາງ ສຸດທິດາ ອຸລາ ຮອງເລຂາໜ່ວຍພັກ, ຜູ້ກວດກາໜ່ວຍພັກ, ຮອງຫົວໜ້າກົມບໍລິການທະນາຄານແຫ່ງ ສປປ ລາວ ໄດ້ກ່າວຢືນຢັນເຖິງໝາກຜົນແຫ່ງການນຳພາຂອງໜ່ວຍພັກ ເຊິ່ງກ່ອນອື່ນໝົດ

ຄະນະໜ່ວຍພັກແມ່ນໄດ້ຍົກສູງວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ຖັນແຖວສະມາຊິກພັກ-ພະນັກງານໄດ້ເປັນປົກກະຕິ, ມີການຮ່ວມຊີວິດພັກ, ທັງສາຍລັດ ແລະ ອົງການຈັດຕັ້ງມະຫາຊົນ, ພ້ອມນີ້ຍັງໄດ້ເຊື່ອມຊຶມບັນດາແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດໃນຫຼາຍຮູບແບບ ອັນໄດ້ເຮັດໃຫ້ທຸກຄົນກຳໄດ້ແໜ້ນ ແລະ ມີແນວຄິດອຸ່ນອຽນໝັ້ນທ່ຽງ, ມີຄວາມສາມັກຄີເປັນເອກະພາບກັບແນວທາງປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ, ຮັກສາໄດ້ທາດແທ້ມູນເຊື້ອ, ມີຄຸນສົມບັດສິນທຳປະຕິບັດ, ມີແນວຄິດຊື່ສັດ - ໂປ່ງໃສ ແລະ ສາມາດຍາດໄດ້ຜົນງານເດັ່ນໃນຫຼາຍດ້ານ.

ຜົນງານອັນພົ້ນເດັ່ນທີ່ໜ່ວຍພັກນຳພາກໍແມ່ນການຄົ້ນຄວ້າ ແລະ ຄຸ້ມຄອງບໍລິຫານແຫຼ່ງທຶນຄັງສຳຮອງເງິນຕາຕ່າງປະເທດຂອງລັດໄດ້ຢ່າງຄ່ອງຕົວ, ປອດໄພ ແລະມີປະສິດທິຜົນ, ນອກນີ້ໜ່ວຍພັກຍັງໄດ້ຄົ້ນ ແລະ ຄຸ້ມຄອງການສະໜອງແຫຼ່ງທຶນສິນເຊື່ອຊຸກຍູ້ການຜະລິດ ແລະ ໂຄງການອື່ນຕາມແຜນຂອງລັດຖະບານດ້ວຍຄວາມຮັບຜິດຊອບສູງ, ບໍລິຫານຄັງເງິນເພື່ອແກ້ໄຂສະພາບຄ່ອງທາງດ້ານເງິນສົດໃຫ້ພຽງພໍກັບຄວາມຕ້ອງການຂອງລູກຄ້າ, ເອົາໃຈໃສ່ຈຳໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ, ພັນທະບັດຄັງເງິນຕາມແຜນການຢ່າງເປັນປົກກະຕິ, ສາມາດສ້າງລາຍຮັບໄດ້ທັງໝົດລື່ນແຜນການທີ່ສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຮັບຮອງເອົາໃນປີ 2009 ລື່ນ 23% ແລະ ລາຍຮັບໃນປີ 2010 ແມ່ນລື່ນຄາດໝາຍ ແຕ່ກໍຢູ່ໃນໄລຍະລໍຖ້າມີການຮັບຮອງຈາກສະພາບໍລິຫານທະນາຄານແຫ່ງ ສປປ ລາວ.

ຄະນະໜ່ວຍພັກ ຍັງໄດ້ໄດ້ຖືເອົາການດຳເນີນຊີວິດໜ່ວຍພັກ, ເສຍເງິນສະຕິພັກເປັນປົກກະຕິ, ມີການຕຳໜິຕິຊົມຕົນເອງບົນ 5 ໜ້າທີ່ຂອງສະມາຊິກພັກ, ໃນປີ 2009 ສາມາດເລື່ອນສະມາຊິກພັກສຳຮອງຂຶ້ນສົມບູນໄດ້ 2 ສະຫາຍ, ສ້າງມະຫາຊົນເຂົ້າສະມາຊິກພັກສຳຮອງໄດ້ 2 ສະຫາຍ ແລະລໍຖ້າຂັ້ນເທິງພິຈາລະນາ 3 ສະຫາຍ ແລະ ໜ່ວຍພັກກົມບໍລິການ ຍັງໄດ້ຮັບການຍັ້ງຢືນເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ 3 ສະໄໝ, ໃນດ້ານພະນັກງານກໍໄດ້ມີການຈັດວາງ-ສັບຊ້ອນຂັ້ນພະແນກ-ຂັ້ນວິຊາການຈຳນວນໜຶ່ງທີ່ມີຄວາມສາມາດເຂົ້າຮັບຜິດຊອບວຽກງານທີ່ສຳຄັນ ແລະ ຈຳເປັນ, ໄດ້ເອົາໃຈໃສ່ຊີ້ນຳອົງການຈັດຕັ້ງມະຫາຊົນໃຫ້ໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ, ໃນວຽກງານປ້ອງກັນກໍໄດ້ຈັດຕັ້ງການເຊື່ອມຊຶມແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເປັນຂອງທົ່ວປວງຊົນພາຍໃຕ້ການນຳພາຂອງພັກ ສ້າງໃຫ້ພະນັກງານມີແນວຄິດຕັ້ງຕໍ່ບໍລິສຸດຕໍ່ພັກ, ຊື່ສັດຕໍ່ໜ້າທີ່, ເຮັດວຽກງານດ້ວຍຄວາມຫ້າວຫັນໂດຍບໍ່ລັກ-ບໍ່ໂລບ ແລະ ບໍ່ຮຽກຮ້ອງຄຸນຄ່າລາຄາ-ສິນບົນສິນຈ້າງຈາກລູກຄ້າ ຫຼື ຜູ້ປະກອບການຕ່າງໆ ມີສະຕິເຄົາລົບກົດໝາຍ, ເຂົ້າຮ່ວມຢ່າງຕັ້ງໃນການປ້ອງກັນສຳນັກງານ ແລະ ປົກປັກຮັກສາເອກະສານ, ວັດຖຸມີຄ່າເງິນ-ຄຳໃຫ້ມີຄວາມປອດໄພ ແລະ ບໍ່ຕົກເຮ່ຍເສຍຫາຍ.

ໃນສະເພາະໜ້ານີ້ຄະນະໜ່ວຍພັກ ຍັງຈະສືບຕໍ່ນໍາພາຖັນແຖວສະມາຊິກພັກ-ພະນັກງານໃນທົ່ວກົມບໍລິການຈັດຕັ້ງຜັນຂະຫຍາຍມະຕິ IX ຂອງພັກ, ກອງປະຊຸມໃຫຍ່ຄັ້ງທີ II ຂອງອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນສືບຕໍ່ຜັນຂະຫຍາຍເນື້ອໃນ 4 ບຸກທະລຸ ໃຫ້ກາຍເປັນແຜນການ-ແຜນງານອັນລະອຽດ ແລະສອດຄ່ອງກັບສະພາບຄວາມເປັນຈິງໂດຍສືບຕໍ່ປະຕິບັດບົດບາດເປັນຜູ້ສະໜອງແຫຼ່ງທຶນສຸດທ້າຍ, ເປັນຜູ້ຈັດຕັ້ງປະຕິບັດຊື້-ຂາຍເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ພ້ອມນີ້ກໍຍັງໄດ້ປະກອບສ່ວນທຶນຮອນເຂົ້າໃນການແກ້ໄຂຄວາມທຸກຍາກ, ການສ້າງວຽກເຮັດງານທໍາຂອງປະຊາຊົນໂດຍຜ່ານທະນາຄານທຸລະກິດຂອງລັດຈໍານວນໜຶ່ງ ແລະ ໂຄງການທີ່ສໍາຄັນຂອງລັດຖະບານ, ສືບຕໍ່ຍູ້ແຮງການເຄື່ອນໄຫວຕາມພາລະບົດບາດເປັນນາຍທະນາຄານໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ ແລະ ສືບຕໍ່ປະກອບສ່ວນຢ່າງແຂງແຮງເຂົ້າໃນການພັດທະນາລະບົບທະນາຄານໃຫ້ມີຄວາມໝັ້ນຄົງ-ຍືນຍົງ ແລະ ທັນສະໄໝເປັນກ້າວໆ, ປະກອບສ່ວນອັນສົມກຽດເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ປະກົດຜົນເປັນຈິງ.